**DAK LAK RUBBER COMPANY.,LTD (DAKLAORUCO)**
**Address: Thaluong Village - Pakse District - Champasak Province - Lao PDR**
**Tel: 00856 31 21 25 70; Fax: 00856 31 25 29 82**
**Email: daklaoruco.lao@gmail.com Website: http://www.daklaoruco.com**

ເລກທີ: 04/ລງ- FSC *ປາກເຊ, ວັນທີ 20 ເດືອນ 01 ປີ 2025*

**ບົດລາຍງານ**

**ວ່າດ້ວຍການຈັດຕັ້ງປະຕິບັດກົດລະບຽບ**

**ການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດ ກັບ ຊຸມຊົນທ້ອງຖິ່ນປີ 2024**

- ອີງຕາມມາດຕະຖານແຫ່ງຊາດສະບັບ ຊົ່ວຄາວສໍາລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020);

- ອີງຕາມກົດລະບຽບສະບັບເລກທີ 19/ລບ- ບສ ລົງວັນທີ 04/08/2023 ຂອງຜູ້ອໍານວຍການບໍລິສັດ ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຊຸມຊົນທ້ອງຖິ່ນ;

- ອີງຕາມບົດບາດແລະໜ້າທີ່ ຂອງຄະນະ FSC ຂອງບໍລິສັດ;

- ອີງຕາມສະພາບຕົວຈິງຢູ່ທີ່ ບໍລິສັດ.

ຄະນະ FSC ຂອງບໍລິສັດລາຍງານກ່ຽວກັບການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ບໍລິສັດກັບຊຸມຊົນທ້ອງຖິ່ນ ປີ 2024 ດັ່ງຕໍ່ໄປນີ້:

ເພື່ອຮັບປະກັນໃຫ້ການເຄື່ອນໄຫວບໍລິຫານຂອງບໍລິສັດປະຕິບັດຕາມກົດໝາຍ, ປະຕິບັດຕາມຫຼັກການ 3 ແລະ 4 ຂອງມາດຕະຖານແຫ່ງຊາດສະບັບຊົ່ວຄາວ ສໍາລັບການປະເມີນປ່າໄມ້ ຂອງ ສປປ ລາວ (FSC-STD-LAO-01-2020). ບໍລິສັດໄດ້ອອກກົດລະບຽບເລກທີ 19/ລບ- ບສ ວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ບໍລິສັດກັບຊຸມຊົນທ້ອງຖິ່ນ.

**1. ຜົນການຈັດຕັ້ງປະຕິບັດກົດລະບຽບ:**

**1.1 ຈັດຕັ້ງປະຕິບັດການເຜີຍແຜ່, ໂຄສະນາໃຫ້ທັງໝົດພະນັກງານກໍາມະກອນ, ຜູ້ອອກແຮງງານ ແລະຊຸມຊົນທ້ອງຖິ່ນ ຮັບຮູ້ກ່ຽວກັບ:**

***1.1.1. ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ***

ເມື່ອມີຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຊັບສິນ ຫຼື ເຮັດໃຫ້ເກີດມົນລະພິດຕໍ່ສິ່ງແວດລ້ອມລະຫວ່າງບໍລິສັດກັບປະຊາຊົນ ຫຼື ຊຸມຊົນ, ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງມີດັ່ງນີ້:

- ໜ່ວຍງານ ແລະ ປະຊາຊົນທີ່ເກີດຂໍ້ຂັດແຍ່ງ ຕ້ອງໄດ້ພົບປະ, ປຶກສາຫາລື, ເຈລະຈາ ແລະ ແກ້ໄຂດ້ວຍຕົນເອງບົນພື້ນຖານຈິດໃຈປອງດອງ.

- ກໍລະນີການໄກ່ເກ່ຍບໍ່ສໍາເລັດ, ໃຫ້ຂຽນຄໍາຮ້ອງຮຽນ ແລະ ເຮັດບົດບັນທຶກ (ຖ້າມີ) ສົ່ງໃຫ້ອໍານາດການປົກຄອງບ້ານ ແລະ ບໍລິສັດເພື່ອແກ້ໄຂ.

- ບໍລິສັດປະສານສົມທົບກັບອົງການກວດກາ, ປະເມີນຜົນ ແລະ ພິຈາລະນາ ແກ້ໄຂຕາມລະບຽບກົດໝາຍເພື່ອຮັບປະກັນຄວາມເປັນທໍາ ແລະ ຖືກຕ້ອງໃຫ້ແກ່ທຸກຝ່າຍ.

- ໃນກໍລະນີທີ່ອໍານາດການປົກຄອງບ້ານແລະບໍລິສັດບໍ່ສາມາດແກ້ໄຂຂໍ້ຂັດແຍ່ງໄດ້ ຫຼືເກີນສິດອໍານາດຂອງ

ດິນ, ການແກ້ໄຂຂໍ້ຂັດແຍ່ງຈະຖືກດຳເນີນໄປຕາມລະບຽບການຂອງລັດ.

***1.1.2 ມາດຕະການຈຳກັດການເກີດຂໍ້ຂັດແຍ່ງ***

- ໃຫ້ຄຳໝັ້ນສັນຍາກ່ຽວກັບສິດນຳໃຊ້ທີ່ດິນ: ບໍລິສັດ ແລະ ຄົວເຮືອນທີ່ອາໄສຢູ່ໃນພື້ນທີ່ ຫຼື ບໍລິເວນທີ່ມີຊາຍແດນຕິດກັບທີ່ດິນຂອງບໍລິສັດ ໃຫ້ຄຳໝັ້ນສັນຍາວ່າຈະບໍ່ບຸກລຸກ ຫຼື ຂັດແຍ່ງທີ່ດິນຂອງກັນແລະກັນ. ເຄົາລົບສິດນຳໃຊ້ທີ່ດິນຂອງແຕ່ລະຝ່າຍ.

- ໃຫ້ຄຳໝັ້ນສັນຍາໃນການປົກປັກຮັກສາຊັບພະຍາກອນປ່າໄມ້, ສິ່ງແວດລ້ອມ, ແຫຼ່ງນ້ຳ, ແລະການປ້ອງກັນການເຊາະເຈື່ອນ:

ບໍລິສັດ ແລະ ອຳນາດການປົກຄອງບ້ານໃຫ້ຄຳໝັ້ນສັນຍາຈະຮ່ວມມືກັນກໍ່ສ້າງ ແລະ ປົກປັກຮັກສາຊັບພະຍາກອນປ່າໄມ້, ໂດຍສະເພາະແມ່ນປ່າປ້ອງກັນ ແລະ ປ່າສະຫງວນ. ບໍ່ມີຝ່າຍໃດຝ່າຍໜຶ່ງຂຸດຄົ້ນ, ຕັດປ່າເຂົ້າໄປໃນເຂດປ່າຕົ້ນນ້ຳ, ປ່າທຳມະຊາດໂດຍບໍ່ໄດ້ຮັບການອະນຸຍາດ. ບໍ່ນຳໃຊ້ຢາປາບສັດຕູພືດທີ່ມີສ່ວນປະກອບສານເຄມີ ທີ່ລັດຖະບານລາວ, WHO ແລະ FSC ຫ້າມໃຊ້ ເພື່ອປົກປັກຮັກສາແຫຼ່ງນ້ຳເພື່ອການຜະລິດ ແລະ ຊີວິດປະຈຳວັນຂອງຊຸມຊົນ.

***1.1.3 ມາດຕະການແກ້ໄຂເມື່ອເກີດມີການລະເມີດ***

- ຖ້າບໍລິສັດ ຫຼື ຄົວເຮືອນ, ຊຸມຊົນລະເມີດຂໍ້ຕົກລົງວ່າດ້ວຍການຄຸ້ມຄອງແລະປົກປັກຮັກສາ ປ່າໄມ້, ສະກັດກັ້ນ ແລະ ຕ້ານອັກຄີໄພ ຫຼື ລະເມີດຄຳໝັ້ນສັນຍາກ່ຽວກັບສິດນຳໃຊ້ທີ່ດິນ, ປົກປັກຮັກສາ ສິ່ງແວດລ້ອມ, ພາກສ່ວນທີ່ລະເມີດນອກຈາກຈະຕ້ອງຊົດເຊີຍຄວາມເສຍຫາຍທີ່ເກີດແລ້ວຍັງຈະຖືກປັບໄໝຕາມລະບຽບການ.

- ນອກຈາກນີ້, ພາກສ່ວນທີ່ລະເມີດຍັງຕ້ອງຖືກສຳຫຼວດຂັ້ນບ້ານ (ຝ່າຍຊຸມຊົນ) ແລະ ຂັ້ນບໍລິສັດ (ຝ່າຍບໍລິສັດ) ແລະ ໃຫ້ຄຳໝັ້ນສັນຍາຈະສ້ອມແປງ ແລະ ປັບປຸງຜົນເສຍຫາຍ.

***1.2. ຜົນໄດ້ຮັບ:***

- ໃນປີ 2024 ມີ 02 ກໍລະນີທີ່ປະຊາຊົນບຸກລຸກດິນຢູ່ເຂດ ນິຄົມ 1 ແລະ ນິຄົມ 2 (ບຸກລຸກບໍລິເວນຂອບເຂດເນື້ອທີ່ພາຍໃຕ້ການຄຸ້ມຄອງຂອງບໍລິສັດ) ຕາມບົດລາຍງານ ສະບັບເລກທີ 21/ລງ-ບສ ລົງວັນທີ 02/08/2024 ວ່າດ້ວຍສະພາບການຕິດຕາມກວດກາບັນດາການເຄື່ອນໄຫວຄຸ້ມຄອງໃນເດືອນ07/2024.

+ ຢູ່ນິຄົມ 1: ເຈົ້າຂອງສວນແມ່ນ ທ້າວ ສອນ ໄດ້ບຸກລຸກເນື້ອທີ່ປູກຢາງພາລາຂອງນິຄົມ 1, ລະອຽດດັ່ງນີ້: ຢູ່ລັອກ 3.3 ( ບຸກລຸກເຂົ້າດິນຂອງ ບໍລິສັດ ເຊິ່ງມີຄວາມຍາວ 150 m, ກວ້າງ 4m) ເພື່ອປູກມັນຕົ້ນ.

+ ຢູ່ນິຄົມ 2: ເຈົ້າຂອງສວນແມ່ນ ນາງໝູບາງ ໄດ້ບຸກລຸກເນື້ອທີ່ປູກຢາງພາລາຂອງນິຄົມ 2, ລະອຽດດັ່ງນີ້: ຢູ່ລັອກ D 3.3 ( ບຸກລຸກເຂົ້າ ດິນຂອງ ບໍລິສັດ ເຊິ່ງມີຄວາມຍາວ 150 m, ກວ້າງ 4m) ເພື່ອປູກເຂົ້າ.

- ມາດຕະການແກ້ໄຂ: ນິຄົມ 1 ແລະ ນິຄົມ 2 ໄດ້ຮ່ວມເຮັດວຽກກັບຜູ້ລະເມີດ ແລະ ນາຍບ້ານ (ຜູ້ຕາງໜ້າອຳນາດການປົກຄອງທ້ອງຖິ່ນ). ປະຊາຊົນໄດ້ຕົກລົງມອບຄືນທີ່ດິນໃຫ້ບໍລິສັດ ພາຍຫຼັງເກັບກ່ຽວຜົນລະປູກແລ້ວ ແລະ ຈະບໍ່ມີການບຸກລຸກອີກໃນລະດູການປູກຕໍ່ໄປ ຕາມບົດບັນທຶກເຮັດວຽກຂອງນິຄົມ 1 ໃນວັນທີ 5/8/2024 ແລະ ນິຄົມ 2 ໃນວັນທີ 17/7/2024.

**2. ແຜນການ 6 ເດືອນຕົ້ນປີ 2025.**

- ສືບຕໍ່ຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດ ກັບຊຸມຊົນທ້ອງຖິ່ນໃນແຕ່ລະປີ.

- ບໍລິສັດ ໃຫ້ຄວາມສຳຄັນກັບການຕິດຕາມກວດກາ ແລະກວດພົບການລະເມີດພາຍໃນດ້ວຍຕົນເອງ.

ມີການລົງໂທດສຳລັບກໍລະນີທີ່ລະເມີດ.

ຂ້າງເທິງແມ່ນເນື້ອໃນຂອງບົດລາຍງານການຈັດຕັ້ງປະຕິບັດກົດລະບຽບວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງລະຫວ່າງບໍລິສັດກັບຊຸມຊົນທ້ອງຖິ່ນໃນປີ 2024.

**ຄະນະ FSC ບໍລິສັດ**

*ບ່ອນນຳສົ່ງ:*

- ຄະນະ ອບກ ບສ;
- ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ຄະນະ FSC ບສ;
- Website ບສ;
- ສຳເນົາຂາອອກ-ຂາເຂົ້າ.

ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD

**ດັ້ງ ດິ່ງ ຟຸ່ງ**

**Dang Dinh Phung**